ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ **237** /ນຍ

ນະຄອນຫຼວງວຽງຈັນ, ວັນທີ ***18.05.2020.***

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມໜັງສືສະເໜີຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0239 /ອຄ.ຫອຄ.ນກ, ລົງວັນທີ 18 ມີນາ 2020;
- ອີງຕາມ ໜັງສືສະເໜີຂອງກະຊວງພາຍໃນ ສະບັບເລກທີ 80/ພນ, ລົງວັນທີ 24 ເມສາ 2020.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແນໃສ່ເສີມຂະຫຍາຍສິດປະຊາທິປະໄຕປະຊາຊົນ ແລະ ຄວາມເປັນເຈົ້າຂອງການຈັດຕັ້ງ, ການເຕົ້າໂຮມຄວາມສາມັກຄີ, ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ການຊຸກຍູ້ສົ່ງເສີມບັນດາຫົວໜ່ວຍທຸລະກິດ ໃຫ້ດຳເນີນທຸລະກິດ ມີປະສິດທິຜົນສູງ ແລະ ຖືກຕ້ອງຕາມກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຊອບທຳຂອງບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ຂຽນເປັນຕົວອັກສອນຫຍໍ້ວ່າ: “ສຄອຊ” ແລະ ຂຽນເປັນພາສາອັງກິດວ່າ: Lao National Chamber of Commerce and Industry “LNCCI” ແມ່ນ

ອົງການຈັດຕັ້ງທາງສັງຄົມຂອງພາກທຸລະກິດ ທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນໂດຍລັດຖະບານ, ເພື່ອເປັນຂົວຕໍ່ລະຫວ່າງພາກລັດ ແລະ ພາກທຸລະກິດ,ມີຄວາມເປັນເຈົ້າຕົນເອງທາງດ້ານການເຄື່ອນໄຫວ ແລະ ງົບປະມານ.

ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ ມີພາລະບົດບາດ ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມເສດຖະກິດ-ກຸ່ມທຸລະກິດ, ສະຫະກອນ, ກຸ່ມຜູ້ປະກອບການທຸລະກິດອິດສະຫຼະ ແລະ ຫົວໜ່ວຍທຸລະກິດທີ່ສ້າງຕັ້ງ ແລະເຄື່ອນໄຫວ ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ໃນການປຸກລະດົມຂົນຂວາຍ, ສຶກສາອົບຮົມ, ນໍາພາ, ຈັດຕັ້ງ, ເຕົ້າໂຮມ ນັກທຸລະກິດ ເພື່ອສົ່ງເສີມ ການດໍາເນີນທຸລະກິດ, ການຄ້າ, ອຸດສາຫະກໍາ, ຫັດຖະກໍາ, ກະສິກໍາ, ການເງິນ ແລະ ການບໍລິການ ລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທໍາຂອງວິສາຫະກິດ ທີ່ເຄື່ອນໄຫວທຸລະກິດຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 3 ຫຼັກການ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ**

ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ເຄື່ອນໄຫວຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ;
2. ເຄື່ອນໄຫວຕາມພາລະບົດບາດ,ໜ້າທີ່ ແລະ ຂອບເຂດສິດ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້ ແລະຕາມກົດລະບຽບ ທີ່ຖືກຮັບຮອງ ຈາກກອງປະຊຸມໃຫຍ່ຂອງຕົນ ໂດຍໄດ້ຮັບການເຫັນດີຈາກກະຊວງອຸດສາຫະກໍາ ແລະ ການຄ້າ;
3. ປະຕິບັດຕາມ ລະບອບປະຊຸມ, ລະບອບລາຍງານສ່ອງແສງ ແລະ ປຶກສາຫາລືຕົກລົງບັນຫາເປັນໝູ່ຄະນະ ໂດຍອີງຕາມສຽງສ່ວນຫຼາຍ, ມີການແບ່ງງານ ແບ່ງຄວາມຮັບຜິດຊອບ ໃຫ້ບຸກຄົນຈັດຕັ້ງປະຕິບັດວຽກງານຢ່າງມີປະສິດທິພາບ,ມີຄວາມໂປ່ງໃສ,ເປີດເຜີຍ ແລະມີຄວາມສະເໝີພາບ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ

**ມາດຕາ 4 ໜ້າທີ່**

ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ມີໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວຖືກຕ້ອງ ຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
2. ປຸກລະດົມ, ຂົນຂວາຍ, ຈັດຕັ້ງ, ເຕົ້າໂຮມ ບັນດາຫົວໜ່ວຍທຸລະກິດເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ;
3. ຊຸກຍູ້, ສົ່ງເສີມ ບັນດາຫົວໜ່ວຍທຸລະກິດ ທີ່ເປັນສະມາຊິກຂອງຕົນ ໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
4. ໃຫ້ຄໍາແນະນໍາ, ສະໜອງຂໍ້ມູນຂ່າວສານ ແລະ ປະສານງານກັບພາກລັດທີ່ກ່ຽວຂ້ອງ ເພື່ອໃຫ້ການຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກແກ່ການສ້າງຕັ້ງວິສາຫະກິດໃໝ່;
5. ປະກອບສ່ວນໃນການຄົ້ນຄວ້າ ແລະ ປະກອບຄໍາຄິດເຫັນໃຫ້ແກ່ອົງການຈັດຕັ້ງລັດ ຕໍ່ການສ້າງ ຫຼື ປັບປຸງນະໂຍບາຍ, ການສ້າງກົດໝາຍ ແລະ ລະບຽບການຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອສ້າງສະພາບແວດລ້ອມທີ່ດີແກ່ການດໍາເນີນທຸລະກິດ;
6. ສົມທົບກັບພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ, ເທດສະບານ, ນະຄອນ ຄົ້ນຄວ້ານໍາສະເໜີອົງການປົກຄອງທ້ອງຖິ່ນ ພິຈາລະນາສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;

7. ຊຸກຍູ້, ສົ່ງເສີມ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ທີ່ໄດ້ສ້າງຕັ້ງແລ້ວໃຫ້ໄດ້ຮັບການພັດທະນາດີຂຶ້ນ;
8. ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້, ປະສົບການກ່ຽວກັບການດຳເນີນທຸລະກິດ ໃຫ້ແກ່ສະມາຊິກ ດ້ວຍຮູບການຕ່າງໆທີ່ເໝາະສົມ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ຊີ້ນຳ, ນຳພາ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ສະພາການຄ້າ ແລະ ອຸດສາຫະກຳແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ໃນການປະຕິບັດກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນ;
10. ປຸກລະດົມ ແລະ ສົ່ງເສີມການສ້າງສາຍພົວພັນແຮງງານທີ່ດີລະຫວ່າງ ຜູ້ໃຊ້ແຮງງານກັບຜູ້ອອກແຮງງານໃນທຸກຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
11. ເຂົ້າຮ່ວມການເຈລະຈາ, ຕໍ່ລອງກ່ຽວກັບ ການຄ້າ, ການລົງທຶນ, ບັນຫາການໃຊ້ແຮງງານ, ເງິນເດືອນ ແລະອື່ນໆທີ່ຈັດຂຶ້ນຢູ່ພາຍໃນຫຼື ຕ່າງປະເທດເພື່ອປົກປ້ອງສິດຜົນປະໂຫຍດທີ່ຊອບທຳຂອງຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
12. ເປັນເຈົ້າການປະສານງານກັບພາກທຸລະກິດ ແລະ ພາກລັດທີ່ກ່ຽວຂ້ອງ ໃນການກະກຽມຈັດກອງປະຊຸມນັກທຸລະກິດລາວ;
13. ເກັບກຳ, ສະຫຼຸບສັງລວມ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ທີ່ເປັນສະມາຊິກ ເພື່ອລາຍງານຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ, ອົງການອື່ນໆ ທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
14. ເກັບກຳ, ສັງລວມ, ວິໄຈ ແລະ ສະໜອງຂໍ້ມູນຂ່າວສານດ້ານ ການຕະຫຼາດ, ລາຄາສິນຄ້າ ໃຫ້ແກ່ສະມາຊິກ ແລະ ທົ່ວສັງຄົມ;
15. ເກັບກຳຂໍ້ມູນຂອງວິສາຫະກິດຢູ່ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ພ້ອມທັງສົ່ງເສີມການສ້າງ ແລະ ພັດທະນາສູນຂໍ້ມູນວິສາຫະກິດ ແລະ ທຸລະກິດ;
16. ເປັນເຈົ້າການຈັດຕັ້ງ ແລະ ລະດົມສະມາຊິກຂອງຕົນ ເຂົ້າຮ່ວມງານວາງສະແດງສິນຄ້າຕ່າງໆ ແລະ ງານພົບປະນັກທຸລະກິດ ທີ່ຈັດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ;
17. ປະຕິບັດໜ້າທີ່ອື່ນ ທີ່ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**ມາດຕາ 5 ຂອບເຂດສິດ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີຂອບເຂດສິດ ດັ່ງນີ້:

1. ຄົ້ນຄວ້າປະກອບຄຳເຫັນຕໍ່ການສະເໜີສ້າງຕັ້ງສະມາຄົມທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີສ້າງຕັ້ງຂຶ້ນຢູ່ ສປປ ລາວ ເພື່ອນຳສະເໜີ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາອະນຸມັດສ້າງຕັ້ງ;
2. ພິຈາລະນາອະນຸມັດ ການຈັດ, ການເຂົ້າຮ່ວມ ງານຕະຫຼາດນັດ ແລະ ງານວາງສະແດງສິນຄ້າ ທີ່ຈັດຢູ່ພາຍໃນ ແລະ ຕ່າງປະເທດ ທີ່ບໍ່ໃຊ້ງົບປະມານຂອງລັດຖະບານ ພາຍໃຕ້ການຊີ້ນຳຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;

3. ນຳໃຊ້ມາດຕະການຕ່າງໆ ເພື່ອປົກປ້ອງສິດຜົນປະໂຫຍດອັນຖືກຕ້ອງ ແລະ ຊອບທຳ ຂອງບັນດາສະມາຊິກ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ເຂົ້າຮ່ວມການປຶກສາຫາລືກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ໃນການກຳນົດຄ່າແຮງງານຕໍ່າສຸດ, ການສ້າງ ຫຼື ປັບປຸງ ກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບ ການນຳໃຊ້ແຮງງານ, ການປະກັນສັງຄົມ ພ້ອມທັງເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ ແລະ ດ້ານເສດຖະກິດ ລະຫວ່າງສະມາຊິກ ຫຼື ລະຫວ່າງສະມາຊິກກັບ ບຸກຄົນ ແລະ ນິຕິບຸກຄົນອື່ນ;
5. ເປັນຕົວແທນພາກທຸລະກິດ ເຂົ້າຮ່ວມການເຈລະຈາ ເພື່ອຮ່ວມມືດ້ານການຄ້າ ເປັນຕົ້ນ ການຊື້-ຂາຍສິນຄ້າ, ການລົງທຶນຮ່ວມດ້ານການຜະລິດ, ການຄ້າ ແລະ ການບໍລິການ ເພື່ອຜົນປະໂຫຍດລວມຂອງພາກທຸລະກິດທັງໝົດ;
6. ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ໃນການແຕ່ງຕັ້ງຕົວແທນຂອງຕົນ ໄປປະຈຳຢູ່ຕ່າງປະເທດ ເພື່ອສ້າງສາຍພົວພັນທາງດ້ານເສດຖະກິດ-ການຄ້າ ຕາມການເຫັນດີຂອງລັດຖະບານ;
7. ຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ຜະລິດຢູ່ໃນ ສປປ ລາວ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;
8. ຕິດຕາມຄະນະຜູ້ແທນລະດັບສູງຂອງລັດຖະບານໄປເຄື່ອນໄຫວຢ້ຽມຢາມ ຫຼື ເຮັດວຽກຢູ່ຕ່າງປະເທດ ໃນນາມຕົວແທນຂອງພາກທຸລະກິດ;
9. ຮັບເອົາການຊ່ວຍເຫຼືອລ້າ ຫຼື ການສະໜັບສະໜູນຈາກ ລັດຖະບານ, ບຸກຄົນ, ນິຕິບຸກຄົນ ທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
10. ສ້າງຕັ້ງ ແລະ ພັດທະນາ ສູນບໍລິການດ້ານຂໍ້ມູນແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ ພ້ອມດ້ວຍສູນສົ່ງເສີມການຕະຫຼາດ ແລະ ຜະລິດຕະພັນທີ່ຜະລິດຢູ່ ສປປ ລາວ ລວມທັງການຝຶກອົບຮົມແບບມີສ່ວນຮ່ວມ ລະຫວ່າງພາກລັດ ແລະ ພາກທຸລະກິດ ຕາມການຕົກລົງເຫັນດີຂອງລັດຖະບານ;
11. ຕິດຕາມ, ກວດກາ, ປະເມີນຜົນ ພາກທຸລະກິດໃນການດຳເນີນທຸລະກິດ, ຢັ້ງຢືນສະຖານະພາບຂອງທຸລະກິດກ່ອນເຂົ້າຮ່ວມປະມູນໂຄງການທີ່ຕິດພັນກັບການນຳໃຊ້ງົບປະມານຂອງພາກລັດ ຕາມການຮຽກຮ້ອງຂອງລັດຖະບານ;
12. ສະເໜີ ຫຼື ຮຽກຮ້ອງ ໃຫ້ພາກສ່ວນກ່ຽວຂ້ອງທົບທວນຄືນກ່ຽວກັບ ການປະມູນທີ່ບໍ່ໂປ່ງໃສ, ການແຂ່ງຂັນທຸລະກິດທີ່ບໍ່ເປັນທຳ ເພື່ອປົກປ້ອງຜົນປະໂຫຍດອັນຊອບທຳຂອງຫົວໜ່ວຍທຸລະກິດ;
13. ໃຫ້ການຍ້ອງຍໍ ແລະ ສະເໜີໃຫ້ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ ໃຫ້ການຍ້ອງຍໍທຸລະກິດທີ່ມີຜົນງານດີເດັ່ນ;
14. ປະຕິບັດສິດອື່ນ ຕາມກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

### ມາດຕາ 6 ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ປະກອບດ້ວຍ: ຄະນະບໍລິຫານງານ, ຄະນະປະຈຳ, ປະທານ ແລະ ຮອງປະທານ, ປະທານກິດຕິມະສັກ, ຄະນະທີ່ປຶກສາ, ຄະນະກຳມາ

ທິການ, ຄະນະກວດກາ, ຄະນະເລຂາທິການ, ຫ້ອງການບໍລິຫານ, ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ສໍານັກງານຜູ້ຕາງໜ້າຢູ່ຕ່າງປະເທດ.

ສິດ ແລະ ໜ້າທີ່ ຂອງ ປະທານກິດຕິມະສັກ, ຄະນະທີ່ປຶກສາ, ຄະນະກໍາມາທິການ ແມ່ນກໍານົດໄວ້ໃນກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

**ມາດຕາ 7 ຄະນະບໍລິຫານງານ**

ຄະນະບໍລິຫານງານຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ຖືກເລືອກຕັ້ງໂດຍກອງປະ ຊຸມໃຫຍ່ຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ມີອາຍຸການສະໄໝລະ 03 ປີ ຊຶ່ງມີພາລະບົດບາດໃນການຊີ້ນໍາ-ນໍາພາທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສໍາຄັນ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ລະຫວ່າງກາງສອງສະໄໝກອງປະຊຸມໃຫຍ່.

ໂຄງປະກອບ, ມາດຕະຖານ ແລະ ເງື່ອນໄຂ ຂອງ ຄະນະບໍລິຫານງານ ໃຫ້ປະຕິບັດຕາມທີ່ກໍານົດໄວ້ຢູ່ໃນກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

**ມາດຕາ 8 ໜ້າທີ່ ແລະ ຂອບເຂດສິດຂອງ ຄະນະບໍລິຫານງານ**

ຄະນະບໍລິຫານງານ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ວາງມາດຕະການທີ່ຈໍາເປັນ ເພື່ອຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່, ມະຕິຂອງຄະນະບໍລິຫານງານຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ມະຕິ, ຄໍາສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆ ຂອງລັດຖະບານ ທີ່ຕິດພັນກັບສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
2. ພິຈາລະນາຕົກລົງກ່ຽວກັບ ແຜນການເຄື່ອນໄຫວ, ແຜນງົບປະມານປະຈໍາປີ ຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
3. ຕົກລົງກ່ຽວກັບ ອັດຕາຄ່າທໍານຽມການເຂົ້າຮ່ວມເປັນສະມາຊິກ, ເງິນບໍາລຸງ ແລະ ລາຍຮັບ-ລາຍຈ່າຍຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
4. ພິຈາລະນາກ່ຽວກັບໂຄງປະກອບການຈັດຕັ້ງ, ການແຕ່ງຕັ້ງ ຫົວໜ້າ ແລະ ຮອງຫົວໜ້າຫົວໜ່ວຍງານ ແລະ ການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
5. ເລືອກຕັ້ງ ຄະນະປະຈໍາ, ປະທານ, ຮອງປະທານ, ຄະນະກວດກາ ແລະ ເລຂາທິການ ຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ; ອໍານວຍຄວບຄຸມການເຄື່ອນໄຫວຂອງຄະນະປະຈໍາ ແລະ ການຈັດຕັ້ງອື່ນໆທີ່ຂຶ້ນກັບ;
6. ປະຕິບັດໜ້າທີ່ ແລະ ສິດອື່ນ ທີ່ກໍານົດໄວ້ໃນກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ກົດໝາຍ ຂອງ ສປປ ລາວ.

**ມາດຕາ 9 ຄະນະປະຈໍາ**

ຄະນະປະຈໍາ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແມ່ນ ຄະນະທີ່ປະກອບດ້ວຍ ປະທານ, ບັນດາຮອງປະທານ, ປະທານກວດກາ, ນາຍຄັງ ທີ່ຖືກຮັບຮອງໂດຍກອງປະຊຸມຄະນະບໍລິຫານງານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວຄັ້ງປະຖົມມະລຶກ ຊຶ່ງເຮັດພາລະບົດບາດໃນການຊີ້ນໍາ-ນໍາພາວຽກງານທັງໝົດຂອງ ຫ້ອງການບໍລິຫານສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ທຸກໆວຽກງານການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ຕາມໜ້າທີ່ ແລະ ຂອບເຂດສິດ ທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້.

ມາດຕະຖານ ແລະ ເງື່ອນໄຂ ຂອງ ຄະນະປະຈຳ ໃຫ້ປະຕິບັດຕາມກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**ມາດຕາ 10 ໜ້າທີ່ ແລະ ຂອບເຂດສິດຂອງ ຄະນະປະຈຳ**

ຄະນະປະຈຳ ມີ ໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1. ຄົ້ນຄວ້າແຜນຍຸດທະສາດການພັດທະນາຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ແຜນການເຄື່ອນໄຫວ, ແຜນງົບປະມານ ເພື່ອສະເໜີກອງປະຊຸມຄະນະບໍລິຫານງານ, ກອງປະຊຸມ ປະຈຳປີ ແລະ ກອງປະຊຸມໃຫຍ່ ພິຈາລະນາຮັບຮອງ;
2. ຊີ້ນຳ ການຄົ້ນຄວ້າ ແລະ ການກຳນົດການບໍລິການຝຶກອົບຮົມທາງດ້ານຄວາມຮູ້, ຄວາມສາມາດທີ່ເໝາະສົມ ແລະ ທ່ວງທັນກັບການແຂ່ງຂັນທາງດ້ານທຸລະກິດການຕະຫຼາດໃຫ້ແກ່ ທຸກພາກສ່ວນທຸລະກິດລາວ, ຜູ້ປະກອບການລາວ ໃນລະດັບປະເທດ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ;
3. ຊີ້ນຳ, ກວດກາ, ຄຸ້ມຄອງ ການຈັດຕັ້ງປະຕິບັດແຜນການ ແລະ ທຸກການເຄື່ອນໄຫວວຽກງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ລວມທັງວຽກງານການພົວພັນພາຍໃນ ແລະ ຕ່າງປະເທດໃນນາມຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
4. ປະສານສົມທົບ ແລະ ປຶກສາຫາລືກັບ ອົງການຈັດຕັ້ງລັດທີ່ກ່ຽວຂ້ອງໃນວຽກງານທີ່ຕິດພັນກັບພາກທຸລະກິດ, ການນຳໃຊ້ແຮງງານ ແລະ ພົວພັນເຖິງການປັບປຸງການຈັດຕັ້ງຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
5. ຈັດຕັ້ງການພົບປະກັບນັກທຸລະກິດລະດັບຊາດ, ລະດັບສາກົນ ເພື່ອໂຄສະນາເຜີຍແຜ່ວຽກງານວາງສະແດງທາງດ້ານທຸລະກິດຢ່າງມີປະສິດທິຜົນ, ທັງຮັບປະກັນໃຫ້ພະນັກງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ສາມາດກຳແໜ້ນ ແລະ ຊາບຊຶ້ງຕໍ່ທິດທາງນະໂຍບາຍຂອງພັກ, ກົດໝາຍ, ລະບຽບການ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານ ທີ່ແນໃສ່ສິ່ງເສີມພາກທຸລະກິດເຂົ້າສູ່ ກົດໝາຍ, ລະບຽບການ ແລະ ເປີດກວ້າງສູ່ການແຂ່ງຂັນກັນຢ່າງຊອບທຳ ໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
6. ພົວພັນ, ຮ່ວມມື ກັບຕ່າງປະເທດ ໃນວຽກງານຕ່າງໆທີ່ກ່ຽວຂ້ອງກັບ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
7. ພິຈາລະນາຮັບຮອງ ຫຼື ຍຸດຕິ ການເປັນສະມາຊິກຂອງສະພາການຄ້າແລະ ອຸດສາຫະກຳແຫ່ງຊາດລາວ;
8. ຈັດຕັ້ງກອງປະຊຸມປະຈຳເດືອນ ເພື່ອພິຈາລະນາບັນຫາຕ່າງໆຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
9. ປະຕິບັດໜ້າທີ່ ແລະ ສິດ ອື່ນ ຕາມກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 11 ປະທານ ແລະ ຮອງປະທານ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ປະກອບດ້ວຍ ປະທານ 01 ທ່ານ ແລະ ຮອງປະທານຈຳນວນໜຶ່ງ ຊຶ່ງໄດ້ຮັບການເລືອກຕັ້ງໂດຍກອງປະຊຸມໃຫຍ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຜູ້ຕາງໜ້າຄະນະບໍລິຫານງານໃນການຊີ້ນຳ-ນຳພາ ການເຄື່ອນໄຫວວຽກງານ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນທຸກຂົງເຂດວຽກງານ ຕາມໜ້າທີ່ ແລະ ຂອບເຂດສິດ ທີ່ກຳນົດໃນດຳລັດສະບັບນີ້.

ຮອງປະທານ ມີພາລະບົດບາດເປັນຜູ້ຊ່ວຍວຽກປະທານ ໃນການປະຕິບັດໜ້າທີ່ວຽກງານຕ່າງໆ ຕາມການມອບໝາຍຂອງປະທານ ແລະ ເຮັດໜ້າທີ່ແທນປະທານໃນເວລາທີ່ ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

**ມາດຕາ 12 ໜ້າທີ່ ແລະ ຂອບເຂດສິດ ຂອງປະທານສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ**

ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີໜ້າທີ່ ແລະ ຂອບເຂດສິດ ຕົ້ນຕໍ ດັ່ງນີ້:

1. ເປັນປະທານກອງປະຊຸມໃຫຍ່ ແລະ ກອງປະຊຸມສະໄໝສາມັນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
2. ຊີ້ນຳ ການເຄື່ອນໄຫວວຽກງານ, ພົວພັນປະສານງານກັບ ພາຍໃນ ແລະ ຕ່າງປະເທດ ຕາມຂອບເຂດສິດ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
3. ຕາງໜ້າໃຫ້ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການປະສານສົມທົບ ແລະ ປຶກສາຫາລືກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນອື່ນໆຕາມພາລະບົດບາດ, ຂອບເຂດສິດຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
4. ພິຈາລະນາ ຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕາມການສະເໜີຂອງເລຂາທິການ;
5. ສະເໜີແຕ່ງຕັ້ງ ຮອງປະທານ, ຄະນະທີ່ປຶກສາ, ປະທານກິດຕິມະສັກ, ຄະນະກວດກາ ເພື່ອໃຫ້ກອງປະຊຸມໃຫຍ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວຮັບຮອງ;
6. ປະຕິບັດໜ້າທີ່ ແລະ ສິດອື່ນ ຕາມກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກົດໝາຍຂອງລັດ.

**ມາດຕາ 13 ຄະນະກວດກາ**

ຄະນະກວດກາ ໄດ້ຮັບການເລືອກຕັ້ງໂດຍ ຄະນະບໍລິຫານງານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີພາລະບົດບາດ, ໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້:

1. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາເມື່ອມີປະກົດການລະເມີດ ກົດລະບຽບ ຫຼື ແບບແຜນ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່, ມະຕິກອງປະຊຸມປະຈຳປີ, ມະຕິກອງປະຊຸມຄະນະບໍລິຫານງານ ແລະ ມະຕິກອງປະຊຸມຂອງຄະນະປະຈຳ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
3. ກວດກາ, ຄຸ້ມຄອງ ການໃຊ້ຈ່າຍການເງິນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
4. ແກ້ໄຂ ຄຳຮ້ອງຟ້ອງ, ຮ້ອງທຸກ ຫຼື ການສະເໜີຕ່າງໆ ຂອງສະມາຊິກ ຕາມຂອບເຂດສິດຂອງຕົນ;
5. ປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ສິດອື່ນ ຕາມກົດລະບຽບ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກົດໝາຍ ຂອງ ສປປ ລາວ.

**ມາດຕາ 14 ຄະນະເລຂາທິການ**

ຄະນະເລຂາທິການ ປະກອບດ້ວຍ ເລຂາທິການ 01 ທ່ານ ແລະ ຮອງເລຂາທິການຈຳນວນໜຶ່ງ ຊຶ່ງເປັນ ຜູ້ປະຈຳການທີ່ໄດ້ຮັບການເລືອກຕັ້ງໂດຍ ຄະນະບໍລິຫານງານສະພາການຄ້າ ແລະ ອຸດສາຫະກຳແຫ່ງ ຊາດລາວ ແມ່ນບຸກຄົນພາຍນອກທີ່ບໍ່ເປັນເຈົ້າຂອງທຸລະກິດ.

**ກ. ເລຂາທິການ**

ເລຂາທິການ ມີພາລະບົດບາດ, ໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້:

1. ກະກຽມເອກະສານ, ເນື້ອໃນ ແລະ ເງື່ອນໄຂ ທີ່ຈໍາເປັນຕ່າງໆໃຫ້ແກ່ກອງປະຊຸມຄະນະບໍລິຫານງານ ແລະ ຄະນະປະຈໍາສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
2. ສະເໜີຄໍາເຫັນ, ຄໍາສະເໜີແນະ ຕໍ່ປະທານ, ຮອງປະທານ ກ່ຽວກັບບັນຫາຕ່າງໆທີ່ພົວພັນເຖິງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
3. ກະກຽມບົດສະຫຼຸບ ປະຈໍາເດືອນ, ປະຈໍາງວດ ແລະ ປະຈໍາປີ ເພື່ອລາຍງານຕໍ່ຄະນະບໍລິຫານງານ, ຄະນະປະຈໍາ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;
4. ສ້າງເງື່ອນໄຂ, ອໍານວຍຄວາມສະດວກ ໃນດ້ານຕ່າງໆທີ່ຈໍາເປັນສໍາລັບການເຄື່ອນໄຫວວຽກງານຂອງປະທານ, ຮອງປະທານ ແລະ ຫົວໜ່ວຍການຈັດຕັ້ງວິຊາການຕ່າງໆ ທີ່ຂຶ້ນກັບສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
5. ພົວພັນ, ປະສານງານ ກັບບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ, ບັນດາອົງການຈັດຕັ້ງ ຂອງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ ແລະ ອົງການຈັດຕັ້ງມະຫາຊົນ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ພົວພັນ, ຮ່ວມມືກັບສາກົນ ແລະ ຕ່າງປະເທດ ຕໍ່ວຽກງານຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດ, ໜ້າທີ່ ແລະ ສິດ ຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ຕາມການອະນຸມັດ ຂອງຄະນະປະຈໍາ;
6. ປະຕິບັດ ພາລະບົດບາດ, ໜ້າທີ່ ແລະ ສິດ ອື່ນ ຕາມກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ກົດໝາຍຂອງ ສປປ ລາວ.

ມາດຕະຖານ, ເງື່ອນໄຂ ແລະ ຄຸນສົມບັດຂອງເລຂາທິການ ແມ່ນໃຫ້ປະຕິບັດຕາມທີ່ກໍານົດໄວ້ຢູ່ໃນກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

**ຂ.ຮອງເລຂາທິການ**

ຮອງເລຂາທິການ ມີພາລະບົດບາດເປັນຜູ້ຊ່ວຍວຽກເລຂາທິການໃນການອໍານວຍຄວາມສະດວກ, ຄວບຄຸມວຽກງານ ຫ້ອງການບໍລິຫານ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ປະຕິບັດໜ້າທີ່ຕ່າງໆທີ່ເລຂາທິການມອບໝາຍໃຫ້ ແລະ ເຮັດໜ້າທີ່ແທນເລຂາທິການເມື່ອເລຂາທິການບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

**ມາດຕາ 15 ຫ້ອງການບໍລິຫານ**

ຫ້ອງການບໍລິຫານ ແມ່ນຫ້ອງການເລຂາທິການ ຊຶ່ງເປັນກົງຈັກຊ່ວຍວຽກ ແລະ ປະຈໍາການຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ມີພາລະບົດບາດເປັນເສນາທິການ ແລະ ຊ່ວຍວຽກ ໃຫ້ແກ່ຄະນະບໍລິຫານງານ, ຄະນະປະຈໍາ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໃນການຄຸ້ມຄອງ, ບໍລິຫານວຽກງານ, ຕິດຕໍ່ພົວພັນປະສານງານພາຍໃນ ແລະ ພາຍນອກ, ອໍານວຍຄວາມສະດວກ, ການປ້ອງກັນຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ.

**ມາດຕາ16 ສະພາການຄ້າແລະອຸດສາຫະກໍາ ແຂວງ,ນະຄອນຫຼວງ,ເມືອງ,ເທດສະບານ,ນະຄອນ**

ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແມ່ນອົງການຈັດຕັ້ງທາງສັງຄົມຂອງພາກທຸລະກິດທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນໂດຍ ອົງການປົກຄອງແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ, ມີຄວາມເປັນເຈົ້າຕົນເອງທາງດ້ານການເຄື່ອນໄຫວ ແລະ ງົບປະ

ມານ, ມີການຮ່ວມມື ແລະ ປະສານສົມທົບກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງຢູ່ທ້ອງຖິ່ນຂອງຕົນ, ເປັນຂົວຕໍ່ລະຫວ່າງພາກລັດ ແລະ ພາກທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ, ສະຫະກອນ, ກຸ່ມຜູ້ປະກອບການທຸລະກິດອິດສະລະ ແລະ ຫົວໜ່ວຍທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຖືກ ຕ້ອງຕາມກົດໝາຍຂອງ ສປປ ລາວ.

ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ມີທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຄືກັນກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແຕ່ເຄື່ອນໄຫວຢູ່ໃນຂອບເຂດສະເພາະແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ເທົ່ານັ້ນ ໂດຍມອບໃຫ້ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ.

ຄະນະບໍລິຫານງານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແມ່ນຖືກຄັດເລືອກຈາກກອງປະຊຸມໃຫຍ່ຂອງສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ.

### ມາດຕາ 17 ສຳນັກງານຜູ້ຕາງໜ້າປະຈຳຢູ່ຕ່າງປະເທດ

ສຳນັກງານຜູ້ຕາງໜ້າປະຈຳຢູ່ຕ່າງປະເທດ ແມ່ນກົງຈັກການຈັດຕັ້ງຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ມີພາລະບົດບາດເປັນຕົວແທນໃຫ້ແກ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເຄື່ອນໄຫວກິດຈະກຳ, ໂຄງການຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ທີ່ໄດ້ປະຕິບັດ, ກຳລັງປະຕິບັດ ຫຼື ຈະປະຕິບັດ ຢູ່ຕ່າງປະເທດ.

ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງສຳນັກງານຜູ້ຕາງໜ້າປະຈຳຢູ່ຕ່າງປະເທດ ແມ່ນ ມອບໃຫ້ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ.

## ໝວດທີ 4
## ສະມາຊິກ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

### ມາດຕາ 18 ສະມາຊິກ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ສະມາຊິກ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີ ສາມ ປະເພດ ຄື:

1. ສະມາຊິກສາມັນ;
2. ສະມາຊິກສົມທົບ;
3. ສະມາຊິກກິດຕິມະສັກ.

### ມາດຕາ 19 ສະມາຊິກສາມັນ

ສະມາຊິກສາມັນ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແມ່ນຫົວໜ່ວຍທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ໄດ້ຮັບໃບອະນຸຍາດລົງທຶນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ມີສິດສະໝັກເຂົ້າເປັນສະມາຊິກ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໂດຍຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ສະມາຊິກສາມັນ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແມ່ນຫົວໜ່ວຍທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ໄດ້ຮັບໃບອະນຸຍາດລົງທຶນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

ຫົວໜ່ວຍທຸລະກິດ ທີ່ມີທຶນຈົດທະບຽນ ແຕ່ 800.000.000 ກີບ (ແປດຮ້ອຍລ້ານກີບ) ຂຶ້ນໄປໃຫ້ສະໝັກເຂົ້າເປັນສະມາຊິກສາມັນ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໂດຍຖືກຕ້ອງຕາມເງື່ອນໄຂ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສ່ວນຫົວໜ່ວຍທຸລະກິດ ທີ່ມີທຶນຈົດທະບຽນຕໍ່າກວ່າ 800.000.000 ກີບ (ແປດຮ້ອຍລ້ານກີບ) ລົງມາ ແມ່ນມີສິດສະໝັກເຂົ້າເປັນສະມາຊິກສາມັນ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ດ້ວຍຄວາມສະໝັກໃຈ.

**ມາດຕາ 20 ສິດ ແລະ ພັນທະ ຂອງສະມາຊິກສາມັນ**

ສະມາຊິກສາມັນ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີສິດ ແລະ ພັນທະ ດັ່ງນີ້:

**ກ. ສິດ ຂອງສະມາຊິກ**

1. ສະເໜີຄວາມຄິດເຫັນຕໍ່ ຄະນະບໍລິຫານງານ, ຄະນະປະຈຳ, ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວກ່ຽວກັບບັນຫາຕ່າງໆ ເພື່ອປັບປຸງການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃຫ້ດີຂຶ້ນ, ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ ແລະ ຫົວໜ່ວຍທຸລະກິດທົ່ວໄປ;
2. ເຂົ້າຮ່ວມກອງປະຊຸມໃຫຍ່ ແລະ ກອງປະຊຸມວິສາມັນ, ເຂົ້າຮ່ວມເລືອກຕັ້ງ ຫຼືສະໝັກຮັບເລືອກຕັ້ງເຂົ້າເປັນຄະນະບໍລິຫານງານ, ຄະນະປະຈຳຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
3. ລົງຄະແນນສຽງ ຕົກລົງຮັບຮອງບັນຫາສຳຄັນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນກອງປະຊຸມວິສາມັນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
4. ນຳໃຊ້ສະຖານທີ່ຂອງ ຫ້ອງການສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃນການຈັດກອງປະຊຸມ, ຝຶກອົບຮົມ ແລະ ອື່ນໆ ທີ່ຕິດພັນກັບວຽກງານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕາມການຕົກລົງຂອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
5. ໄດ້ຮັບບູລິມະສິດໃນການເຂົ້າເຖິງຂໍ້ມູນຕ່າງໆ ເປັນຕົ້ນ ຂໍ້ມູນ-ຂ່າວສານກ່ຽວກັບການຄ້າ, ການລົງທຶນ ຢູ່ພາຍໃນ ແລະ ຕ່າງປະເທດ, ຕະຫຼາດສິນຄ້າ ຢູ່ພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ ກ່ຽວກັບການດຳເນີນທຸລະກິດ;
6. ໄດ້ຮັບບູລິມະສິດໃນການເຂົ້າຮ່ວມ ກອງປະຊຸມ, ຝຶກອົບຮົມ, ສຳມະນາ ທີ່ຈັດຂຶ້ນໂດຍສະພາການຄ້າແລະ ອຸດສາຫະກຳແຫ່ງຊາດລາວ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃນການດຳເນີນທຸລະກິດ;
7. ໄດ້ຮັບບູລິມະສິດ ໃນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງນັກທຸລະກິດພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນບົດຮຽນ ແລະ ຈັດຫາຄູ່ຮ່ວມມືກ່ຽວກັບການຄ້າ, ການລົງທຶນ ຢູ່ພາຍໃນແລະຕ່າງປະເທດ;
8. ໄດ້ຮັບບຸລິມະສິດ ພິຈາລະນາສົ່ງເຂົ້າຮ່ວມຄັດເລືອກເປັນນັກທຸລະກິດດີເດັ່ນຢູ່ພາຍໃນ ແລະ ສາກົນ;

9. ໄດ້ຮັບບູລິມະສິດ ແບ່ງປັນງົບປະມານ, ການນໍາໃຊ້ວັດຖຸດິບ, ການເຂົ້າຮ່ວມງານ ແລະ ອື່ນໆ ທີ່ລັດຖະບານຕົກລົງມອບໃຫ້ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ເປັນຜູ້ຈັດແບ່ງໃຫ້ບັນດາຫົວໜ່ວຍທຸລະກິດ;
10. ເຂົ້າຮ່ວມງານວາງສະແດງສິນຄ້າ, ງານຕະຫຼາດນັດ ແລະ ງານອື່ນໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ຈັດຂຶ້ນ ຫຼື ຮັບຜິດຊອບ ໂດຍສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ;
11. ໄດ້ຮັບການໃຫ້ຄໍາປຶກສາ, ຄໍາແນະນໍາ ຈາກຄະນະບໍລິຫານງານ, ຄະນະເລຂາທິການ ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ກ່ຽວກັບການດໍາເນີນທຸລະກິດ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂໍ້ຂັດແຍ່ງດ້ານແຮງງານ ແລະ ອື່ນໆ ເພື່ອປົກປ້ອງສິດຜົນປະໂຫຍດ ຂອງສະມາຊິກໂດຍຊອບທໍາ;
12. ເຂົ້າຮ່ວມການເຈລະຈາ ເພື່ອຮ່ວມມືດ້ານການຄ້າ ເປັນຕົ້ນ ການຊື້-ຂາຍສິນຄ້າ, ການລົງທຶນຮ່ວມດ້ານການຜະລິດ, ການຄ້າ ແລະ ການບໍລິການ ເພື່ອຜົນປະໂຫຍດຂອງຕົນ;
13. ໄດ້ຮັບສິດອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ຂອງ ສປປ ລາວ.

**ຂ. ພັນທະຂອງ ສະມາຊິກ**

1. ສະໜັບສະໜູນ, ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມຂະບວນການ, ການເຄື່ອນໄຫວ ກໍຄືກິດຈະກໍາຕ່າງໆທີ່ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ຈັດຂຶ້ນ;
2. ໂຄສະນາ, ເຜີຍແຜ່ກຽດຕິຄຸນ, ຊື່ສຽງພາລະບົດບາດ, ຄຸນງາມຄວາມດີຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໃຫ້ສັງຄົມຮູ້ຈັກຢ່າງກວ້າງຂວາງ;
3. ປະຕິບັດ ຄ່າບໍາລຸງສະມາຊິກ, ພັນທະ ແລະ ເງື່ອນໄຂຕ່າງໆ ຂອງການເຂົ້າເປັນສະມາຊິກຕາມ ທີ່ກໍານົດໃນກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ກົດໝາຍຂອງ ສປປ ລາວ.

**ມາດຕາ 21 ສະມາຊິກສົມທົບ**

ສະມາຊິກສົມທົບ ແມ່ນພົນລະເມືອງລາວ ທີ່ເປັນຕົວແທນຕາງໜ້າໃຫ້ແກ່ຫົວໜ່ວຍທຸລະກິດ, ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ, ຄວາມເຫັນດີເຫັນ ພ້ອມນໍາກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ, ມີການປະກອບສ່ວນສົມທົບ, ໃຫ້ການຊ່ວຍເຫຼືອດ້ານແນວຄວາມຄິດ, ງົບປະມານ ຫຼື ອື່ນໆ ໃຫ້ແກ່ສະພາການຄ້າ ແລະ ອຸດສາ ຫະກໍາແຫ່ງຊາດລາວ.

ສະມາຊິກສົມທົບ ມີສິດ ແລະ ພັນທະ ຄືກັບສະມາຊິກສາມັນ ແຕ່ບໍ່ມີສິດໃນການເລືອກຕັ້ງ ແລະ ບໍ່ມີສິດ ສະໝັກຮັບເລືອກຕັ້ງເຂົ້າໃນຕໍາແໜ່ງຄະນະບໍລິຫານງານ, ຄະນະປະຈໍາ, ຄະນະກວດກາ, ນາຍຄັງ, ເລຂາທິການ ແລະ ບໍ່ມີສິດລົງຄະແນນສຽງຕົກລົງບັນຫາຕ່າງໆທີ່ສໍາຄັນຂອງ ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ.

**ມາດຕາ 22 ສະມາຊິກກິດຕິມະສັກ**

ສະມາຊິກກິດຕິມະສັກ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ໂດຍບໍ່ຈໍາແນກສັນຊາດ ຊຶ່ງເປັນຜູ້ມີຄຸນສົມບັດ ແລະ ຄວາມສາມາດ, ມີປະສົບການ ແລະ ຄວາມຊໍານິຊໍານານ ໃນການຄຸ້ມຄອງບໍລິຫານທຸລະກິດ ແລະ ມີຄວາມເຫັນດີເຫັນພ້ອມນໍາກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ໂດຍເຫັນດີ

ໃຫ້ການສະໜັບສະໜູນ ທາງດ້ານຄວາມຮູ້, ຄວາມສາມາດ, ງົບປະມານ ຫຼື ອື່ນໆ ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ກັບສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ສະມາຊິກກິດຕິມະສັກ ມີສິດ ແລະ ພັນທະ ຄືກັບສະມາຊິກສາມັນ ແຕ່ບໍ່ມີສິດໃນການເລືອກຕັ້ງ ແລະ ບໍ່ມີສິດສະໝັກຮັບເລືອກຕັ້ງເຂົ້າໃນຕຳແໜ່ງຄະນະບໍລິຫານງານ, ຄະນະປະຈຳ, ຄະນະກວດກາ, ນາຍຄັງ, ເລຂາທິການ ແລະ ບໍ່ມີສິດລົງຄະແນນສຽງຕົກລົງບັນຫາຕ່າງໆທີ່ສຳຄັນ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

## ໝວດທີ 5
## ກອງປະຊຸມ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

### ມາດຕາ 23 ກອງປະຊຸມ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີກອງປະຊຸມຕ່າງໆ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມວິສາມັນ;
3. ກອງປະຊຸມປະຈຳປີ ຂອງຄະນະບໍລິຫານງານ.

### ມາດຕາ 24 ກອງປະຊຸມໃຫຍ່

ກອງປະຊຸມໃຫຍ່ ແມ່ນ ການນຳພາສູງສຸດຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ເປີດຂຶ້ນ 03 ປີ ຕໍ່ຄັ້ງ ຕາມຮູບແບບກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ ຕາມການຕົກລົງຂອງຄະນະບໍລິຫານງານ ຫຼື ກົດລະບຽບຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ກອງປະຊຸມໃຫຍ່ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີໜ້າທີ່ສຳຄັນ ແລະ ຕົ້ນຕໍ ດັ່ງນີ້:

1. ຜ່ານ ແລະ ຮັບຮອງເອົາ ບົດລາຍງານສະພາບການປະຕິບັດໜ້າທີ່ ໃນໄລຍະທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ;
2. ຜ່ານ ແລະ ຮັບຮອງເອົາ ບົດສະຫຼຸບລາຍງານສະພາບການຄຸ້ມຄອງ ແລະ ໃຊ້ຈ່າຍງົບປະມານຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ;
3. ດຳເນີນການເລືອກຕັ້ງ ແລະ ຮັບຮອງເອົາຄະນະບໍລິຫານງານຊຸດໃໝ່;
4. ຜ່ານ ແລະ ຮັບຮອງເອົາຮ່າງກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ທີ່ຮ່າງຂຶ້ນໃໝ່ ຫຼື ຮ່າງສະບັບປັບປຸງ;
5. ຕົກລົງບັນຫາສຳຄັນອື່ນໆ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

ຫຼັກການດຳເນີນກອງປະຊຸມ, ຜູ້ເຂົ້າຮ່ວມ ແລະ ການລົງຄະແນນສຽງໃນກອງປະຊຸມໃຫຍ່ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໃນກົດລະບຽບ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

### ມານຕາ 25 ກອງປະຊຸມວິສາມັນ

ກອງປະຊຸມວິສາມັນ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປີດຂຶ້ນເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສາມັນທັງໝົດ ຫຼື ມີສະມາຊິກໃນຄະນະບໍລິຫານງານຢ່າງໜ້ອຍຈຳນວນສອງສ່ວນສາມຂຶ້ນໄປຮຽກຮ້ອງເປີດກອງປະຊຸມໃຫຍ່ວິສາມັນຂຶ້ນເພື່ອຕົກລົງບັນຫາສຳຄັນໃດໜຶ່ງ.

ຫຼັກການດຳເນີນກອງປະຊຸມ, ຜູ້ເຂົ້າຮ່ວມ ແລະ ການລົງຄະແນນສຽງ ໃນກອງປະຊຸມວິສາມັນໃຫ້ປະຕິບັດຕາມທີ່ໄດ້ກຳນົດໃນກົດລະບຽບຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**ມາດຕາ 26 ກອງປະຊຸມປະຈຳປີຂອງຄະນະບໍລິຫານ**

ກອງປະຊຸມປະຈຳປີຂອງຄະນະບໍລິຫານງານເປີດຂຶ້ນປີລະຄັ້ງ ເພື່ອພິຈາລະນາບັນຫາຕົ້ນຕໍ ດັ່ງນີ້:

1. ພິຈາລະນາຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໃນໜຶ່ງປີຜ່ານມາ ແລະ ຜ່ານແຜນການເຄື່ອນໄຫວໃນປີຕໍ່ໜ້າ;
2. ພິຈາລະນາຜ່ານ ແລະ ຮັບຮອງເອົາບົດສະຫຼຸບການໃຊ້ຈ່າຍງົບປະມານໃນໜຶ່ງປີຜ່ານມາ ແລະ ແຜນງົບປະມານໃນປີຕໍ່ໄປ;
3. ຮັບຮອງການກວດສອບງົບປະມານລາຍຮັບ ແລະ ລາຍຈ່າຍຈາກອົງການກວດສອບ;
4. ຜ່ານ ແລະ ຮັບຮອງເອົາບັນດາໂຄງການຕ່າງໆ ທີ່ສຳຄັນ ແລະ ບັນຫາສຳຄັນອື່ນໆ.

## ໝວດທີ 6
## ການເງິນ

**ມາດຕາ 27 ການເງິນ-ງົບປະມານ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີການເງິນ-ງົບປະມານສະເພາະ ເພື່ອປະຕິບັດ ພາລະບົດບາດ ແລະ ໜ້າທີ່ວຽກງານຂອງຕົນ.

ການເງິນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບຳລຸງຈາກສະມາຊິກ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ທັງໝົດ;
2. ຄ່າການບໍລິການ ຂອງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (ສບວ);
3. ຄ່າການບໍລິການ ຂອງສູນສົ່ງເສີມການຕະຫຼາດ, ມາດຕະຖານສິນຄ້າ ແລະ ຜະລິດຕະພັນລາວ;
4. ຄ່າການບໍລິການ ຂອງສູນບໍລິການຂໍ້ມູນວິສາຫະກິດ ແລະ ທຸລະກິດ;
5. ຄ່າການບໍລິການ ການໃຫ້ຄຳແນະນຳ ກ່ຽວກັບການສ້າງຕັ້ງທຸລະກິດໃໝ່ ລວມທັງການໃຫ້ການຊ່ວຍເຫຼືອໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ຄ່າການບໍລິການ ໃນການຈັດຝຶກອົບຮົມ, ສຳມະນາຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ທຸລະກິດ ແລະ ອື່ນໆ;
7. ຄ່າການບໍລິການ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ການບໍລິການອື່ນໆ ທີ່ລັດຖະບານມອບໝາຍ;
8. ຄ່າການບໍລິການ ຈັດງານວາງສະແດງສິນຄ້າ, ຕະຫຼາດນັດ ຢູ່ພາຍໃນ ແລະ ຕ່າງປະເທດ;
9. ຄ່າການບໍລິການ ໃຫ້ຄຳປຶກສາດ້ານຕ່າງໆແກ່ບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ ແລະ ບໍ່ໄດ້ເປັນສະມາຊິກຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຕາມໜ້າທີ່ ແລະ ຂອບເຂດຂອງຕົນ;
10. ເງິນຊ່ວຍເຫຼືອ ຫຼື ສະໜັບສະໜູນ ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດ, ອົງການຈັດຕັ້ງສາກົນ ທີ່ປະຈຳຢູ່ ສປປ ລາວ ແລະ ຢູ່ຕ່າງປະເທດ.

**ມາດຕາ 28 ການຄຸ້ມຄອງລາຍຮັບ-ລາຍຈ່າຍ**

ການຄຸ້ມຄອງລາຍຮັບ-ລາຍຈ່າຍຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໃຫ້ປະຕິບັດຕາມທີ່ກຳນົດໃນກົດລະບຽບ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກົດໝາຍ ທີ່ກ່ຽວຂ້ອງຂອງລັດ.

**ມາດຕາ 29 ການກວດສອບບັນຊີ-ການເງິນ**

ລະບົບບັນຊີການເງິນຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ຖືກກວດສອບໂດຍ ນັກກວດສອບບັນຊີພາຍໃນ ແລະ ພາຍນອກ.

ລະບຽບ ແລະ ຂັ້ນຕອນຂອງການກວດສອບ ແມ່ນປະຕິບັດຕາມລະບຽບການກວດສອບບັນຊີຂອງ ສປປ ລາວ.

## ໝວດທີ 7
## ສະມາຄົມເສດຖະກິດ, ກຸ່ມທຸລະກິດ
## ແລະ ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ

**ມາດຕາ 30 ທີ່ຕັ້ງ,ພາລະບົດບາດ,ໜ້າທີ່ແລະຂອບເຂດສິດຂອງສະມາຄົມເສດຖະກິດແລະກຸ່ມທຸລະກິດ**

ບັນດາຂັ້ນຕອນ ການສ້າງຕັ້ງ, ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງ ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ, ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ແມ່ນໃຫ້ປະ ຕິບັດຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 31 ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ**

ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ ພາຍຫຼັງໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**ມາດຕາ 32 ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ**

ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ພາຍຫຼັງໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດ ໝາຍ ຂອງ ສປປ ລາວ ໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 33 ຕາປະທັບ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຕາມລະບຽບການ.

**ມາດຕາ 34  ການຈັດຕັ້ງປະຕິບັດ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດດຳລັດສະບັບນີ້, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 35 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ສະບັບເລກທີ 316/ນຍ, ລົງວັນທີ 20 ພະຈິກ 2009.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

**ທອງລຸນ ສີສຸລິດ**

**LAO PEOPLE'S DEMOCRATIC REPUBLIC**

**PEACE INDEPENDEN DEMOCRACY UNITY PROSPERITY**

*********************

**Prime Minister's Office** **No..237../ PM**

**Vientiane, 18th May 2020**

# DECREE
# ON THE ORGAZATION AND OPERATION OF LAO NATIONAL CHAMBER OF COMMERCE AND INDUSTRY

- Referring to the law on Government of Lao PDR No. 04 / NA, dated 08 November 2016;
- Referring to the law on Enterprise No. 46 / NA, dated 26 December 2013;
- Referring to the proposal letter from the Minister of Industry and Commerce No. 0239 / MIC, dated 18 March 2020;
- Referring to the proposal letter from the Minister of Home Affair No. 80 / HA, dated 24 April 2020

**The Prime Minister of the Lao PDR issued the Decree as follow:**

## CHAPTER I
## GENERAL PROVISION

### Article 1: The objectives

This Decree defines the positions, roles, functions, rights, structures, principles and working regime concerning to organization and operation of Lao National Chamber of Commerce and Industry (LNCCI), aimed at enhancing people's democracy, ownership of  organization, unity and mutual assistance as well as promoting

business units to run their business activities in an effective and lawful manner. It also aims to protect legitimate right and benefits of member business units and ensure their contributions to the socio-economic development of Lao PDR.

**Article 2: Position and Role**

